ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຄຊ
ເລກທີ ...0849....
ວັນທີ 08 AUG 2017
ໂທລະສັບ 021 217770

ເລກທີ: 37 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 08 ສິງຫາ 2017

ລາຍງານການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
ປະຈຳອາທິດທີ 24-28/07/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

## I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນໜຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0.61% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນຈຳນວນປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທຳອິດ ເພີ່ມຂຶ້ນເປັນ 244.000 ຄົນ ຂອງອາທິດທີ 22/07/2017 ໃນອາທິດຜ່ານມາ ແລະ ຕົວເລກຍອດຂາຍບ້ານປະຈຳເດືອນ 06/2017 ຫຼຸດລົງ 1.80% ຈາກເກີນດຸນ 1.10% ຕໍ່ເອີໂຣໃນເດືອນຜ່ານມາ[1].

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 17-21/07/2017 | ອາທິດນີ້ 24-28/07/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1.1645 | 1.1716 | -0.61% |
| ເຢນ/ໂດລາ | 111.58 | 111.22 | 0.32% |
| ບາດ/ໂດລາ | 33.45 | 33.310 | 0.42% |
| ເປໂຊ/ໂດລາ | 50.73 | 50.51 | 0.44% |
| ຣູເປຍ/ໂດລາ | 13.312 | 13.326 | -0.11% |
| ໂດລາສິງກະໂປ/ໂດລາ | 1.3642 | 1.3589 | 0.39% |
| ຢວນ/ໂດລາ | 6.7687 | 6.7405 | 0.42% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 4.12% ຈາກ 47.11 ໂດລາ/ບາເຣວ ມາເປັນ 49.05 ໂດລາ/ບາເຣວ ເນື່ອງຈາກຄວາມຕ້ອງການຊົມໃຊ້ນ້ຳມັນຂອງສະຫະລັດເພີ່ມຂຶ້ນ ຊຶ່ງເຫັນໄດ້ຈາກຄັງສຳຮອງນ້ຳມັນດິບຂອງສະຫະລັດອາເມລິກາ ຫຼຸດລົງ 7.21 ລ້ານບາເຣວ ຂອງອາທິດທີ 21/07/2017 ຈາກຫຼຸດລົງ 4.73 ລ້ານບາເຣວໃນອາທິດຜ່ານມາ;

[1] ແຫຼ່ງທີ່ມາຂອງຂໍ້ມູນ https://www.dailyfx.com/calendar

- ສຳລັບລາຄາຄຳເພີ່ມຂຶ້ນ 0,89% ຈາກ 1.248.11 ໂດລາ/ອອນ ມາເປັນ 1.259,23 ໂດລາ/ອອນ ເນື່ອງຈາກນັກລົງທຶນເຂົ້າຊື້ສັນຍາຊື້-ຂາຍຄຳ ເພີ່ມຂຶ້ນ ເພື່ອປ້ອງກັນຄວາມສ່ຽງຈາກຄວາມຜັນຜວນຂອງຄ່າເງິນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,01% ແລະ ອ່ອນຄ່າ 0,81% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າ 0,68% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າ 6,95% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 17-21/06/2017 | | | ອາທິດນີ້ 24-28/07/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະນາຄານ[2] | | | | | | | | | | | | |
| ໂດລາ | 8.384.16 | 8.404.90 | 8 391.80 | 8.381.95 | 8 408.62 | 8 393.05 | 0.03% | -0.04% | -0.01% | -0.78% | -0.65% | -0.68% |
| ບາດ | 249.00 | 250.53 | 250.04 | 250.69 | 253.21 | 252.10 | -0.67% | -1.06% | -0.81% | -6.82% | -7.15% | -6.95% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0,33% ເມື່ອທຽບໃສ່ອາທິດຜ່ານມາ. ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 23,95%;
- ປະລິມານເງິນ M2 ຫຼຸດລົງ 0,48% ເມື່ອທຽບໃສ່ອາທິດຜ່ານມາ. ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 19,45%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (21-27/07/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 29.02 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 63.69 ລ້ານໂດລາ ແລະ ຂາຍໂດລາໄດ້ 34.67 ລ້ານໂດລາ) ແຕ່ ຂາຍເງິນບາດສຸດທິ 1.455.38 ລ້ານບາດ (ໃນນີ້ ຊື້ບາດໄດ້ 483.62 ລ້ານບາດ ແລະ ຂາຍບາດໄດ້ 1.939,00 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາເພີ່ມຂຶ້ນ 23,61% ແລະ ເງິນບາດເພີ່ມຂຶ້ນ 44,36%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 21.87 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 102.50 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 1.12 ລ້ານໂດລາສະຫະລັດ ແລະ ເງິນບາດຈຳນວນ 57.65 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ເງິນໂດລາສຸດທິ ຈຳນວນ 0.41 ລ້ານໂດລາ ແລະ ເງິນບາດສຸດທິ ຈຳນວນ 100,26 ລ້ານບາດ.

[2] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖົວຖ່ວງນ້ຳໜັກ

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີຜ່ານມາ 14-20/07/2017 | | ອາທິດທີ 21-27/07/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **53,92** | **408,64** | **63,69** | **483,62** | **18,12%** | **18,35%** |
| - ທ/ຄທຸລະກິດລັດ | 6,61 | 70,35 | 11,33 | 58,43 | 71,41% | -16,94% |
| - ທ/ຄທຸລະກິດອື່ນໆ | 47,31 | 338,29 | 52,36 | 425,19 | 10,67% | 25,69% |
| 2. ການຂາຍເງິນຕາຕ່າງປະເທດ | **25,65** | **1.269,49** | **34,67** | **1.939,00** | **35,17%** | **52,74%** |
| - ທ/ຄທຸລະກິດລັດ | 8,13 | 92,63 | 17,80 | 189,17 | 118,94% | 104,22% |
| - ທ/ຄທຸລະກິດອື່ນໆ | 17,52 | 1.176,86 | 16,87 | 1.749,83 | -3,71% | 48,69% |
| ຊື້-ຂາຍສຸດທິ ທທກ | **28,27** | **-860,85** | **29,02** | **-1.455,38** | **2,65%** | **69,06%** |
| - ຜິດດ່ຽງ ຊື້-ຂາຍ | 52,43% | -210,66% | 45,56% | -300,93% | -13,10% | 42,85% |
| - ມູນຄ່າການຊື້-ຂາຍ | **79,57** | **1.678,13** | **98,36** | **2.422,62** | **23,61%** | **44,36%** |
| 3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ | **-12,00** | **-73,00** | **-21,87** | **-102,50** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 12,00 | 73,00 | 21,87 | 102,50 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **0,40** | **40,49** | **1,12** | **57,65** | | |
| 5. ທຫລ ກັບ ພາກສ່ວນ ອື່ນໆ | **-0,32** | **0,00** | **0,41** | **100,26** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,08 | 0,00 | 0,48 | 100,26 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,07 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 07/2017 ຄາດວ່າຢູ່ໃນລະດັບ 0.21% ຫຼຸດລົງຈາກ 0.41% ໃນເດືອນ 06/2017.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດ ໃນອາທິດນີ້ ຫຼຸດລົງ 47.4% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 70.35 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 158.6% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 169.39 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 628 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 199 ສະບັບ ເທົ່າກັບ 24.06% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 210.16 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 102.93 ຕື້ກີບ ເທົ່າກັບ 32.87% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (21-27/07/2017) ມີທັງໝົດ 3.368 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 3.301 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ 488.56 ຕື້ກີບ ຈາກ 860.18 ຕື້ກີບ ມາເປັນ 1.348.74 ຕື້ກີບ ເທົ່າກັບ 56.79%;

- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 67 ຄັ້ງ, ມູນຄ່າການໂອນໃນອາທິດ ເພີ່ມຂຶ້ນ 14,17 ຕື້ກີບ ຈາກ 212,57 ຕື້ກີບ ມາເປັນ 226,74 ຕື້ກີບ ເທົ່າກັບ 6,66%.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.027,23 ຈຸດ ຫຼຸດລົງ 0,19% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 95.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 505,65 ລ້ານກີບ ເພີ່ມຂຶ້ນ 72,89% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 36,65% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 17-21/07/2017 | ດັດຊະນີອາທິດທີ 24-28/07/2017 | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.029,23 | 1.027,23 | -0,19 | |

ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX) (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 30.600 | 169.365.000 | 5.535 | 73.600 | 397.235.000 | 5.397 | 140,52 | 134,54 | -138 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 24.100 | 122.910.000 | 5.100 | 21.400 | 108.420.000 | 5.066 | -11,20 | -11,79 | -34 |
| ບໍລິສັດລາວເວີນ ມະຫາຊົນ | - | - | 7.550 | - | - | 7.600 | - | - | 50 |
| ບໍລິສັດປີໂຕລັງມເຫລດຖິ້ງລາວ ມະຫາຊົນ | 100 | 200.000 | 2.000 | - | - | 2.000 | -100,00 | -100,00 | - |
| ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ | - | - | 2.900 | - | - | 2.900 | - | - | - |
| ທັງໝົດ | 54.800 | 292.475.000 | 5.337 | 95.000 | 505.655.000 | 5.323 | 73,36 | 72,89 | |

3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການຈັດກອງປະຊຸມ ແລະ ສຳມະນາຕ່າງໆ: ❶ ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ກໍລະກົດ 2017 ທີ່ (ຫສນຍ); ❷ ກອງປະຊຸມສົ່ງເສີມການຮ່ວມມືໃນການຕ້ານທະນະບັດປອມຢູ່ໃນປະເທດ ກຳປູເຈຍ, ລາວ ແລະ ຫວຽດນາມ (ຢູ່ປະເທດ ຫວຽດນາມ); ❸ ກອງປະຊຸມ ລາຍງານກ່ຽວກັບການປະເມີນການປະຕິບັດ

ວຽກງານຂອງພະນັກງານປະຈຳປີ 2016 ທີ່ (ທຫລ) ແລະ ❹ ກອງປະຊຸມຄະນະຮັບຜິດຊອບຮ່າງດຳລັດ CIB ທີ່ (ທຫລ);

- **ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມປຶກສາຫາລືກ່ຽວກັບການປັບປຸງຮ່າງດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ ຢູ່ (ກະຊວງຍຸຕິທຳ); ❷ ກອງປະຊຸມຄົ້ງປະຖົມມະລຶກຂອງຄະນະກຳມະທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງ ແມ່ຍິງ ແລະ ແມ່-ເດັກ ປະຈຳປີ2017 ຢູ່ (ໂຮງແຮມແລນມາກ); ❸ ກອງປະຊຸມປຶກສາຫາລືຮ່ວມກັນລະຫວ່າງ ທຫລ ແລະ ກະຊວງການເງິນ ກ່ຽວກັບແຜນການພັດທະນາລະບົບຊຳລະສະສາງແຫ່ງຊາດ ແລະ ❹ ສຳເລັດການກະກຽມຈັດຝຶກອົບຮົມວຽກງານການກວດກາ ສະຫະກອນ ໃຫ້ແກ່ພະນັກງານທະນາຄານແຫ່ງ ສປປ ລາວ ໃນລະຫວ່າງວັນທີ 24-27 ກໍລະກົດ 2017;

- ສຳເລັດການຈັດຕັ້ງພິທີເປີດ ທຫລພາກເໜືອ ປະຈຳແຂວງ ຊຽງຂວາງ ໂດຍຜູ້ເຂົ້າຮ່ວມປະກອບດ້ວຍ ທ່ານຜູ້ອຳນວຍການ ພ້ອມດ້ວຍຄະນະ;

## III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;

- **ກະກຽມຈັດ, ເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມທີມງານເສດຖະກິດຂອງລັດຖະບານ ທີ່ (ຫສນຍ); ❷ ກອງປະຊຸມຄະນະຜູ້ອຳນວຍການ ທຫລ ປະຈຳເດືອນ ສິງຫາ 2017 ທີ່ (ທຫລ); ❸ ກອງປະຊຸມເຜີຍແຜ່ວຽກງານການເຄື່ອນໄຫວຂອງບັນດາບໍລິສັດ ທີ່ດຳເນີນທຸລະກິດທາງດ້ານການເງິນບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບ ຂອງ ສປປ ລາວ ທີ່ (ທຫລ); ❹ ກອງປະຊຸມລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການສົ່ງເສີມການຜະລິດເປັນສິນຄ້າ ແລະ ໂຄງການຄ້ຳປະກັນຄວາມໝັ້ນຄົງດ້ານສະບຽງອາຫານ ທີ່ (ຫສນຍ); ❺ ກອງປະຊຸມຄະນະຮັບຜິດຊອບປັບປຸງໂຄງສ້າງ ຂອງທະນາຄານພັດທະນາລາວ ທີ່ (ທຫລ); ແລະ ❻ ກອງປະຊຸມປຶກສາຫາລືລະຫວ່າງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ ກ່ຽວກັບການກຳນົດລາຄາຮຸ້ນຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ ແລະ ບໍລິສັດ ຊີມັງລາວ ມະຫາຊົນ ທີ່ (ສຄຄຊ);

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ